## ກໍລະນີສຶກສາ

**ນາງ ພອນສີ**

- ອາຍຸ 35 ປີ / ເພດຍິງ
- ຕັດສິນໃຈຊື້ ພຣູໄລ້ ເຊັບເວີ ພລັສ ໃຫ້ລາວເອງເປັນຜູ້ໄດ້ຮັບການປະກັນໄພຊີວິດ

| ຈຳນວນເງິນຄຸ້ມຄອງທັງໝົດ | ໄລຍະເວລາຂອງສັນຍາປະກັນໄພ |
|---|---|
| **100.000.000 ກີບ** | **15 ປີ** |

## ຄ່າທຳນຽມປະກັນໄພທີ່ ນາງ ພອນສີ ຈ່າຍ

| **ຮູບແບບການຈ່າຍເງິນທຳນຽມ** | ລາຍເດືອນ | ປະຈຳໄຕມາດ | ລາຍເຄິ່ງປີ | ລາຍປີ |
|---|---|---|---|---|
| **ຈ່າຍເປັນປະຈຳ ສຳລັບສັນຍາ 15 ປີທີ່ຈ່າຍເປັນງວດ (15/15)** | **308.500 ກີບ** | **925.500 ກີບ** | **1.799.500 ກີບ** | **3.427.500 ກີບ** |
| **7 ປີ ສຳລັບສັນຍາທີ່ຈ່າຍແບບມີໄລຍະເວລາຈຳກັດ (15/7)** | **535.000 ກີບ** | **1.605.500 ກີບ** | **3.121.500 ກີບ** | **5.946.000 ກີບ** |

**ໝາຍເຫດ**: ຄ່າທຳນຽມປະກັນໄພທີ່ສະເໜີ (ຄ່າທຳນຽມປະກັນໄພ) ແມ່ນສຳລັບບຸກຄົນທີ່ມີສຸຂະພາບໃນເກນມາດຕະຖານ. ອາດມີການປ່ຽນແປງຄ່າທຳນຽມປະກັນໄພເພີ່ມຕື່ມສຳລັບເງື່ອນໄຂທາງການແພດສະເພາະຕາມການປະເມີນການຮັບປະກັນຂອງຂໍ້ສະເໜີປະກັນຊີວິດ.

## ຜົນປະໂຫຍດສຳລັບ ນາງ ພອນສີ

**1**

ຄຸ້ມຄອງຜົນປະໂຫຍດສຳລັບຄອບຄົວ ທ່ານ ນາງ ພອນສີ ໃນກໍລະນີທີ່ລາວໄດ້ຈາກໄປ ຫຼື ໄດ້ຮັບຜົນກະທົບຈາກການເສຍອົງຄະແບບສິ້ນເຊີງ ແລະ ຖາວອນອັນເນື່ອງມາຈາກສາເຫດທີ່:

- ບໍ່ເກີດຈາກອຸປະຕິເຫດ: **100.000.000 ກີບ**
- ເກີດຈາກອຸປະຕິເຫດ: **200.000.000 ກີບ**

**2**

ຜົນປະໂຫຍດຈາກການຢູ່ຄົບສັນຍາຂອງ ທ່ານ ນາງ ພອນສີ ແລະ ຄອບຄົວຂອງລາວໃນຕອນທ້າຍຂອງໄລຍະເວລາສັນຍາບໍ່ຄວນມີເຫດການພາຍໃຕ້ຂໍ້ທີ່ 1 ເກີດຂຶ້ນ:

- ໄດ້ຮັບເງິນກ້ອນໃນທ້າຍປີຂອງປີທີ່ 15 ສຳລັບສັນຍາທີ່ຈ່າຍເປັນງວດ: **56.553.500 ກີບ**
- ໄດ້ຮັບເງິນກ້ອນໃນທ້າຍປີຂອງປີທີ່ 15 ສຳລັບສັນຍາຈ່າຍແບບມີໄລຍະເວລາຈຳກັດ: **45.784.000 ກີບ**

**ໝາຍເຫດ**: ມູນຄ່າຈາກການຢູ່ຄົບສັນຍາໃນແຕ່ລະກໍລະນີຂ້າງເທິງແມ່ນຖືກຄິດໄລ່ເປັນຄ່າທຳນຽມລວມຂອງການຈ່າຍແບບລາຍປີທັງໝົດ ຄູນ110%

PLAL_V02/2023/LA

# ຄຳຖາມທີ່ຖືກຖາມເລື້ອຍໆ

**Q** ຂ້ອຍຈຳເປັນຕ້ອງມີການກວດສຸຂະພາບເພື່ອສະໝັກເອົາສັນຍາ ພຣູໄລ້ ເຊັບເວີ ພລັສ ບໍ່?

**A** ຄຳຮ້ອງສະໝັກອາດຕ້ອງມີການກວດສຸຂະພາບ, ຂຶ້ນກັບອາຍຸຂອງຜູ້ສະໝັກ ແລະ ຈຳນວນວົງເງິນປະກັນໄພທີ່ຕ້ອງການ. ຜູ້ສະໝັກທີ່ມີອາຍຸສູງ ແລະ ຈຳນວນວົງເງິນປະກັນໄພທີ່ເລືອກອາດຈະໄດ້ຮັບການກວດສຸຂະພາບເພີ່ມເຕີມ.

**Q** ຈະເປັນແນວໃດຖ້າຂ້ອຍບໍ່ສາມາດຈ່າຍຄ່າທຳນຽມປະກັນໄພຂອງຂ້ອຍໄດ້?

**A** ທ່ານຄວນສະໝັກຜະລິດຕະພັນນີ້ກໍ່ຕໍ່ເມື່ອທ່ານຕັ້ງໃຈທີ່ຈະຈ່າຍຄ່າທຳນຽມປະກັນໄພທັງໝົດ.ຖ້າທ່ານພາດການຈ່າຍຄ່າທຳນຽມປະກັນໄພ, ທ່ານຈະມີໄລຍະເວລາຜ່ອນຜັນຫົກສິບຫ້າ (65) ວັນ ແລະ ຖ້າການຈ່າຍຄ່າທຳນຽມປະກັນໄພ ຍັງຄ້າງຊຳລະຫຼັງຈາກໄລຍະເວລາຜ່ອນຜັນ (ເວລາເພີ່ມເຕີມສະເພາະທີ່ທ່ານໄດ້ຮັບຫຼັງຈາກມື້ຄົບກຳນົດເພື່ອຊຳລະຄ່າທຳນຽມປະກັນໄພ ແລະ ຫຼີກເວັ້ນການໝົດອາຍຸຂອງສັນຍາປະກັນໄພ), ສັນຍາປະກັນໄພຂອງທ່ານຈະສິ້ນສຸດລົງ ແລະ ທ່ານຈະສູນເສຍການຄຸ້ມຄອງຂອງສັນຍາປະກັນໄພ.

**Q** ຈະເປັນແນວໃດຖ້າຂ້ອຍຕ້ອງການສົ່ງສັນຍາປະກັນໄພຄືນ?

**A** ທ່ານມີໄລຍະເວລາການຍົກເລີກ 30 ວັນ (ໄລຍະລູກຄ້າພິຈາລະນາສັນຍາ) ນັບຈາກມື້ທີ່ໄດ້ຮັບເອກະສານສັນຍາປະກັນໄພ. ໃນກໍລະນີດັ່ງກ່າວ, ພວກເຮົາຈະຄືນເງິນຄ່າປະກັນໄພທີ່ໄດ້ຮັບມາໃຫ້ກັບທ່ານຫຼັງຈາກຫັກຄ່າທຳນຽມສຳລັບການກວດສຸຂະພາບ (ຖ້າມີ) ແລະ ພາສີໃດໆທີ່ຈ່າຍໄປ.

**Q** ຈະເປັນແນວໃດຖ້າຂ້ອຍຕ້ອງການຍົກເລີກສັນຍາປະກັນໄພຂອງຂ້ອຍ?

**A** ທ່ານສາມາດຍົກເລີກສັນຍາ ພຣູໄລ ເຊັບເວີ ພລັສ ຂອງທ່ານ ເມື່ອໃດກໍ່ໄດ້.

**A** ຖ້າທ່ານຍົກເລີກສັນຍາພາຍໃນໄລຍະເວລາການຍົກເລີກ (ໄລຍະລູກຄ້າພິຈາລະນາສັນຍາ), ພວກເຮົາຈະຄືນຄ່າທຳນຽມປະກັນໄພທີ່ທ່ານໄດ້ຈ່າຍມາ, ບໍ່ລວມຄ່າກວດສຸຂະພາບ ແລະ ຄ່າທຳນຽມການດຳເນີນການໃດໆ.

**A** ພາຍຫຼັງ ໄລຍະເວລາການຍົກເລີກ (ໄລຍະລູກຄ້າພິຈາລະນາສັນຍາ), ຖ້າທ່ານຍົກເລີກສັນຍາຂອງທ່ານພາຍໃນສອງປີສັນຍາທຳອິດ, ສັນຍາຈະຖືກຍົກເລີກ ແລະ ຈະບໍ່ມີການຈ່າຍມູນຄ່າເວນຄືນ.

**A** ເລີ່ມຈາກປີທີ່ສາມຂອງສັນຍາຂອງທ່ານ, ພຣູໄລ ເຊັບເວີ ພລັສ ຈະມີມູນຄ່າເວນຄືນ. ເຊິ່ງໝາຍຄວາມວ່າພວກເຮົາສາມາດຄືນຄ່າທຳນຽມປະກັນໄພສ່ວນໜຶ່ງໃຫ້ກັບທ່ານ ຖ້າທ່ານຍົກເລີກສັນຍາຂອງທ່ານຫຼັງຈາກຕອນນີ້.

**Q** ຂ້ອຍສາມາດຟື້ນສັນຍາຂາດອາຍຸໄດ້ບໍ່?

**A** ທ່ານສາມາດຟື້ນສັນຍາຂອງທ່ານພາຍໃນຊາວສີ່ (24) ເດືອນນັບແຕ່ມື້ຂາດອາຍຸໂດຍການຈ່າຍຄ່າທຳນຽມປະກັນໄພ (ເງິນປະກັນໄພ) ທີ່ຍັງບໍ່ທັນໄດ້ຈ່າຍ ເພື່ອສືບຕໍ່ການຄຸ້ມຄອງ. ທ່ານອາດຈະໄດ້ຮັບການຮ້ອງຂໍໃຫ້ກວດສຸຂະພາບຕາມການພິຈາລະນາເພື່ອຂໍຮັບການປະກັນໄພຊີວິດທີ່ບໍລິສັດກຳນົດໄວ້.

**Q** ຜົນປະໂຫຍດເມື່ອຢູ່ຄົບສັນຍາພາຍໃຕ້ສັນຍາປະກັນໄພແມ່ນຫຍັງ?

**A** ທ່ານຈະໄດ້ຮັບເປີເຊັນຂອງຄ່າທຳນຽມປະກັນໄພທັງໝົດທີ່ຈ່າຍເມື່ອຢູ່ຄົບສັນຍາ, ໃນກໍລະນີທີ່ທ່ານຈ່າຍຄ່າທຳນຽມປະກັນໄພທັງໝົດ. ເປີເຊັນຂອງຄ່າທຳນຽມປະກັນໄພທີ່ທ່ານຈະໄດ້ຮັບແມ່ນອີງຕາມໄລຍະຂອງສັນຍາປະກັນໄພ ແລະ ຮູບແບບການຈ່າຍຄ່າທຳນຽມປະກັນໄພທີ່ທ່ານເລືອກ. ຜົນປະໂຫຍດອາດຈະໜ້ອຍກວ່າຈຳນວນຄ່າທຳນຽມປະກັນໄພທັງໝົດທີ່ຈ່າຍ, ໃນກໍລະນີທີ່ຄ່າທຳນຽມປະກັນໄພຖືກຈ່າຍຮູບແບບທີ່ບໍ່ແມ່ນລາຍປີ.

**Q** ຂໍ້ຍົກເວັ້ນຂອງຜະລິດຕະພັນແມ່ນຫຍັງ?

**A** ສັນຍາປະກັນໄພມີຂໍ້ຍົກເວັ້ນບາງສ່ວນກ່ຽວກັບການຄຸ້ມຄອງການເສຍຊີວິດ ແລະ ເສຍອົງຄະແບບສິ້ນເຊີງ ແລະ ຖາວອນ. ສຳລັບລາຍລະອຽດເພີ່ມເຕີມສາມາດເບິ່ງໃນພາກສ່ວນຕໍ່ໄປ.

**ບໍລິສັດ ພຣູເດັນໂຊລ໌ ປະກັນໄພຊີວິດ (ລາວ) ຈຳກັດ**
ຊັ້ນ 5 ອາຄານ ວຽງຈັນເຊັນເຕີ້, ຖະໜົນ ຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
(856) 21 211123 | info@prudential.la | www.prudential.la | ໜຶ່ງໃນກຸ່ມ ບໍລິສັດ ພຣູເດັນໂຊລ໌ ມະຫາຊົນ

# ພຣູໄລ້ ເຊັບເວີ ພລັສ

ການຄຸ້ມຄອງທາງດ້ານການເງິນຂອງທ່ານ ແລະ ຄົນທີ່ທ່ານຮັກ

PRUDENTIAL

Listening. Understanding. Delivering.





## ເປັນຫຍັງທ່ານຈຶ່ງຕ້ອງການ ພຣູໄລ້ ເຊັບເວີ ພລັສ?

ສິ່ງສຳຄັນທີ່ທ່ານຄາດຫວັງທີ່ຈະໄດ້ຮັບເພື່ອໂຕທ່ານເອງ ແລະ ຄົນທີ່ທ່ານຮັກ. ທ່ານສາມາດວາງແຜນໄດ້ດີທີ່ສຸດ ແຕ່ຊີວິດນັ້ນມາພ້ອມກັບຄວາມບໍ່ແນ່ນອນ. ພຣູໄລ້ ເຊັບເວີ ພລັສ ຖືກອອກແບບມາເພື່ອຊ່ວຍໃຫ້ທ່ານບັນລຸເປົ້າຫມາຍເຫຼົ່ານັ້ນ ເຖິງແມ່ນວ່າໃນເຫດການບໍ່ຄາດຝັນເກີດຂຶ້ນກັບທ່ານທີ່ເຮັດໃຫ້ ທ່ານເສຍຊີວິດກ່ອນໄວອັນຄວນ, ຫຼື ທ່ານບໍ່ສາມາດເຮັດວຽກໄດ້ຍ້ອນການພິການຖາວອນ. ຈຳນວນເງິນທີ່ຖືກຈ່າຍໃຫ້ກັບຄົນທີ່ທ່ານຮັກ ຈະຊ່ວຍໃຫ້ເຂົາເຈົ້າກັບຄືນສູ່ເສັ້ນທາງເພື່ອບັນລຸເປົ້າໝາຍທີ່ສຳຄັນດັ່ງກ່າວ.

## ຜົນປະໂຫຍດຂອງຜະລິດຕະພັນນີ້ແມ່ນຫຍັງ?

**ຜົນປະໂຫຍດຂອງປະກັນຊີວິດພ້ອມກັບໄລຍະການຄຸ້ມຄອງປະກັນທີ່ຢືດຢຸ່ນໄດ້**

- ທ່ານສາມາດເລືອກໄລຍະເວລາຂອງສັນຍາປະກັນໄພ **5/7/10/15 ປີ** ແລະ ຕັດສິນໃຈເລືອກຈຳນວນການຄຸ້ມຄອງທີ່ເຫມາະສົມກັບຄວາມຕ້ອງການໃນການຄຸ້ມຄອງທາງດ້ານການເງິນຂອງທ່ານ.
- ໃນລະຫວ່າງໄລຍະເວລາຂອງສັນຍາປະກັນໄພ, ທ່ານຈະໄດ້ຮັບການຄຸ້ມຄອງ ແລະ ໃນກໍລະນີທີ່ເຫດການບໍ່ຄາດຝັນເກີດຂຶ້ນກັບທ່ານ (ເສຍຊີວິດ) ຫຼື ກາຍເປັນຄົນເສຍອົງຄະແບບສິ້ນເຊີງ ແລະ ຖາວອນກ່ອນວັນຄົບກຳນົດ, ພຣູເດັນໂຊລ໌ ຈະຈ່າຍເງິນໃຫ້ຜູ້ໄດ້ຮັບຜົນປະໂຫຍດຂອງທ່ານ, ໃນກໍລະນີເຫດການທີ່ບໍ່ຄາດຝັນເກີດຂຶ້ນກັບທ່ານ (ເສຍຊີວິດ) ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນທີ່ເກີດມາຈາກອຸປະຕິເຫດ, ຈຳນວນເງິນການຄຸ້ມຄອງທີ່ຈ່າຍໃຫ້ກັບຜູ້ຮັບຜົນປະໂຫຍດຂອງທ່ານຈະຖືກເພີ່ມຂຶ້ນເປັນ**ສອງເທົ່າ**.
- ເມື່ອຄົບກຳນົດຂອງໄລຍະເວລາຄຸ້ມຄອງ ແລະ ອີງຕາມໄລຍະເວລາຂອງສັນຍາປະກັນໄພ ແລະ ຄວາມຖີ່ຂອງການຊຳລະຄ່າທຳນຽມປະກັນໄພ, ພຣູເດັນໂຊລ໌ຈະ**ສົ່ງຄືນຄ່າທຳນຽມປະກັນໄພຂອງທ່ານເຖິງ 110%**. ໃນກໍລະນີບໍ່ມີເຫດການທີ່ບໍ່ຄາດຝັນເກີດຂຶ້ນກັບທ່ານ (ບໍ່ເສຍຊີວິດ) ແລະ ບໍ່ໄດ້ເສຍອົງຄະແບບສິ້ນເຊີງ ແລະ ຖາວອນ.
- ຜົນປະໂຫຍດທັງຫມົດແມ່ນ**ຄົງທີ່ ແລະ ຮັບປະກັນໄດ້!**

| | |
|---|---|
| ສະຫນອງຄວາມຄຸ້ມຄອງທາງດ້ານການເງິນໃນໄລຍະຂອງສັນຍາປະກັນໄພ | ຄ່າທຳນຽມປະກັນໄພແບບຄົງທີ່ໝາຍເຖິງຄ່າທຳນຽມຈະຢູ່ໃນລາຄາດຽວຕະຫຼອດສັນຍາ |
| ຜົນປະໂຫຍດຄູນສອງໃນກໍລະນີເຫດການທີ່ບໍ່ຄາດຝັນ (ເສຍຊີວິດ) ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນທີ່ເກີດມາຈາກອຸປະຕິເຫດ | ທາງເລືອກໃນການຈ່າຍຄ່າທຳນຽມປະກັນໄພໄລຍະສັ້ນກວ່າໄລຍະຂອງສັນຍາປະກັນທີ່ຖືກຄຸ້ມຄອງ |
| ຄ່າທຳນຽມະກັນໄພລາຍປີເບື້ອງຕົ້ນ 126.000 ກີບ/ເດືອນ | ຈ່າຍຄ່າປະກັນໄພລາຍປີ/ລາຍເຄິ່ງປີ/ ລາຍສາມເດືອນ ຫຼື ລາຍເດືອນ |
| ສົ່ງຄືນຄ່າທຳນຽມປະກັນໄພເມື່ອຢູ່ຄົບສັນຍາ ແລະ ບໍ່ໄດ້ຖືກຈ່າຍຜົນປະໂຫຍດຈາກຄວາມຄຸ້ມຄອງ | ທາງເລືອກໃນການກູ້ຢືມເງິນໃນສັນຍາປະກັນຂອງທ່ານເອງ ເລີ່ມຕົ້ນເມື່ອສັນຍາສາມາດເວນຄືນໄດ້ |

**ໝາຍເຫດ:** *ອີງຕາມຮູບແບບການຈ່າຍຄ່າທຳນຽມປະກັນໄພ ແລະ ໄລຍະເວລາຂອງສັນຍາ

## ແຜນນີ້ມີລັກສະນະແນວໃດ?

| ໄລຍະເວລາຄຸ້ມຄອງ (ໄລຍະເວລາຂອງສັນຍາປະກັນໄພ) | 5 ປີ | 7 ປີ | 10 ປີ | 15 ປີ |
|---|---|---|---|---|
| ເກນອາຍຸ (ຕາມອາຍຸວັນເກີດລ່າສຸດ) | 18 - 60 ປີ | 18 - 58 ປີ | 18 - 55 ປີ | 18 - 50 ປີ |
| ທາງເລືອກການຈ່າຍເງິນປະກັນໄພ (ຄ່າທຳນຽມປະກັນໄພ) | 3 ປີ | 5 ປີ | 5 ແລະ 10 ປີ | 7 ແລະ 15 ປີ |
| ວົງເງິນປະກັນໄພຕ່ຳສຸດ | ຈ່າຍເປັນງວດ: 40.000.000 ກີບ<br>ຈ່າຍແບບມີໄລຍະເວລາຈຳກັດ: 30.000.000 ກີບ | | | |
| ວົງເງິນປະກັນໄພສູງສຸດ | ຂຶ້ນກັບນະໂຍບາຍການພິຈາລະນາສັນຍາຂອງພຣູເດັນໂຊລ໌ | | | |
| ຮູບແບບການຈ່າຍຄ່າທຳນຽມປະກັນໄພ | ລາຍປີ / ລາຍເຄິ່ງປີ / ລາຍສາມເດືອນ ຫຼື ລາຍເດືອນ<br>ສຳລັບສັນຍາປະກັນໄພໄລຍະ 5 ແລະ 7 ປີ ແມ່ນອະນຸຍາດພຽງການຊຳລະແບບລາຍປີເທົ່ານັ້ນ | | | |

## ລາຍລະອຽດຂອງຜົນປະໂຫຍດ:

ໃນກໍລະນີທີ່ເຫດການບໍ່ຄາດຝັນເກີດຂຶ້ນກັບທ່ານ (ເສຍຊີວິດ) ກ່ອນສັນຍາປະກັນໄພຈະສິ້ນສຸດລົງ, ວົງເງິນຄຸ້ມຄອງທັງໝົດ
**100%**
ຈະຖືກຈ່າຍໃຫ້ກັບຜູ້ຮັບຜົນປະໂຫຍດ

ໃນກໍລະນີທີ່ເຫດການບໍ່ຄາດຝັນເກີດຂຶ້ນກັບທ່ານ (ເສຍອົງຄະແບບສິ້ນເຊີງ ແລະ ຖາວອນ) ກ່ອນສັນຍາປະກັນໄພຈະສິ້ນສຸດລົງ, ວົງເງິນຄຸ້ມຄອງທັງໝົດ
**100%**
ຈະຖືກຈ່າຍໃຫ້ກັບຜູ້ຮັບຜົນປະໂຫຍດ

ໃນກໍລະນີເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງແລະຖາວອນຂອງຜູ້ຮັບການປະກັນໄພຊີວິດ ເນື່ອງຈາກອຸປະຕິເຫດ, ວົງເງິນຄຸ້ມຄອງຄູນສອງ ຫຼື
**200%**
ຈະຖືກຈ່າຍໃຫ້ກັບຜູ້ຮັບຜົນປະໂຫຍດ

## ເງິນກູ້ໃນສັນຍາປະກັນໄພ:

- ທ່ານສາມາດກູ້ຢືມເງິນຕໍ່ກັບສັນຍາປະກັນໄພ. ທ່ານສາມາດເລືອກຂໍເງິນກູ້ໄດ້ສູງເຖິງ 90% ມູນຄ່າເວນຄືນ. ອັດຕາດອກເບ້ຍຂອງສັນຍາຈະຖືກກຳນົດຕາມນະໂຍບາຍຂອງບໍລິສັດ ແລະ ທົບຕົ້ນເປັນລາຍປີ. ເງິນກູ້ທີ່ຍັງຄົງຄ້າງບວກກັບດອກເບ້ຍຈະຖືກຫັກອອກຈາກຜົນປະໂຫຍດຕ່າງໆພາຍໃຕ້ສັນຍາປະກັນໄພ.
- ເມື່ອມູນຄ່າຂອງເງິນກູ້ ແລະ ດອກເບ້ຍສູງເກີນຈຳນວນເງິນທີ່ຈະໄດ້ຮັບຄືນ, ສັນຍາປະກັນໄພຈະຖືກຍົກເລີກທັນທີ.

## ຜົນປະໂຫຍດເມື່ອຄົບກຳນົດສັນຍາ:

ໃນກໍລະນີທີ່ຜູ້ຮັບການປະກັນໄພຊີວິດຍັງມີຊີວິດຢູ່ ແລະ ບໍ່ເສຍອົງຄະແບບສິ້ນເຊີງ ແລະ ຖາວອນໃນມື້ຄົບກຳນົດສັນຍາ ແລະ ຖືກຄຸ້ມຄອງໂດຍສັນຍາປະກັນໄພພ້ອມກັບການຈ່າຍຄ່າທຳນຽມທີ່ຄົບຖ້ວນ, ຜົນປະໂຫຍດເມື່ອຄົບກຳນົດສັນຍາຈະຖືກຈ່າຍດັ່ງນີ້:

**ສັນຍາໄລຍະ 5 ປີ**
**100%**
ຂອງຄ່າທຳນຽມປະກັນໄພລາຍປີ x ໄລຍະການຈ່າຍຄ່າທຳນຽມປະກັນໄພ

**ສັນຍາໄລຍະ 7 ປີ**
**102%**
ຂອງຄ່າທຳນຽມປະກັນໄພລາຍປີ x ໄລຍະການຈ່າຍຄ່າທຳນຽມປະກັນໄພ

**ສັນຍາໄລຍະ 10 ປີ**
**105%**
ຂອງຄ່າທຳນຽມປະກັນໄພລາຍປີ x ໄລຍະການຈ່າຍຄ່າທຳນຽມປະກັນໄພ

**ສັນຍາໄລຍະ 15 ປີ**
**110%**
ຂອງຄ່າທຳນຽມປະກັນໄພລາຍປີ x ໄລຍະການຈ່າຍຄ່າທຳນຽມປະກັນໄພ

**ໝາຍເຫດ:** *ຜົນປະໂຫຍດອາດຈະໜ້ອຍກວ່າຈຳນວນຄ່າທຳນຽມປະກັນໄພທັງໝົດທີ່ຈ່າຍ, ໃນກໍລະນີທີ່ຄ່າທຳນຽມປະກັນໄພຖືກຈ່າຍຮູບແບບທີ່ບໍ່ແມ່ນລາຍປີ

## ຂໍ້ຍົກເວັ້ນ

### ຂໍ້ຍົກເວັ້ນໃນການຮ້ອງຂໍສິນປະກັນໄພທີ່ບໍ່ເກີດຈາກອຸປະຕິເຫດ:

- ການຂ້າຕົວຕາຍ ຫຼື ພະຍາຍາມຈະຂ້າຕົວຕາຍ, ການທຳຮ້າຍຮ່າງການຈົນໄດ້ຮັບບາດເຈັບ, ບໍ່ວ່າຈະຍ້ອນຄວາມເປັນປົກກະຕິທາງຈິດ ຫຼື ບໍ່ກໍຕາມ; ຫຼື
- ເຊື້ອໄວລັດພູມຄຸ້ມກັນບົກພ່ອງ (ໂລກ ເອັດໄອວີ HIV) ຫຼື ບັນດາການເຈັບປ່ວຍທີ່ກ່ຽວຂ້ອງກັບໂລກເອດ ລວມມີ ໂລກພູມຄຸ້ມກັນບົກພ່ອງ (ໂລກ ເອດ AIDS) ແລະ/ຫຼື ບັນດາການກາຍພັນ, ການສືບພັນ ຫຼື ການແປງພັນອື່ນໆ; ຫຼື
- ການກະທຳ ຫຼື ພະຍາຍາມກະທຳ ທີ່ເປັນການກະທຳຜິດທາງອາຍາຂອງເຈົ້າຂອງສັນຍາປະກັນໄພ, ຜູ້ໄດ້ຮັບການປະກັນຊີວິດເອງ ຫຼື ຜູ້ໄດ້ຮັບຜົນປະໂຫຍດ /ບັນດາຜູ້ໄດ້ຮັບຜົນປະໂຫຍດ; ຫຼື
- ການນຳໃຊ້ສານເສບຕິດ ແລະ ສານກະຕຸ້ນທີ່ຜິດກົດໝາຍ, ພາວະແຊກຊ້ອນຂອງພວກເຂົາ; ຫຼື
- ສົງຄາມ, ການຮຸກຮານ, ການໂຈມຕີຂອງປະເທດອື່ນ (ເຖິງວ່າຈະມີ ຫຼື ບໍ່ມີການປະກາດສົງຄາມກໍ່ຕາມ), ການຕໍ່ຕ້ານ, ການເຂົ້າຮ່ວມການກໍ່ການຮ້າຍ, ສົງຄາມກາງເມືອງ, ການກໍ່ຈາລະຈອນ, ເຂົ້າຮ່ວມການກະທຳຜິດກົດໝາຍ, ການປະຕິວັດ, ການກໍ່ກະບົດ, ການແຊກແຊງຂອງເຈົ້າໜ້າທີ່ທະຫານ ຫຼື ການໂຄ່ນລົ້ມ, ການຈໍລະຈົນ ຫຼື ກໍ່ຄວາມວຸ່ນວາຍທາງແພ່ງ; ຫຼື
- ພາວະທີ່ມີຢູ່ກ່ອນແລ້ວ, ເປັນຕົ້ນແມ່ນ ຄວາມເຈັບປ່ວຍ, ພະຍາດ ຫຼື ຄວາມບົກຜ່ອງທີ່ຜູ້ໄດ້ຮັບການປະກັນຊີວິດຢູ່ໃນຄວາມທໍລະມານ ແລະ ໄດ້ປຶກສາກັບທ່ານໝໍກ່ອນວັນເຂົ້າສັນຍາ, ເວັ້ນເສຍແຕ່ວ່າຜູ້ໄດ້ຮັບການປະກັນຊີວິດໄດ້ຖືກຮັບປະກັນໄພພາຍໃຕ້ສັນຍານີ້ເປັນເວລາຕໍ່ເນື່ອງ 12 ເດືອນຕິດຕໍ່ກັນ.

### ຂໍ້ຍົກເວັ້ນໃນການຮ້ອງຂໍສິນປະກັນໄພທີ່ເກີດຈາກອຸປະຕິເຫດ

- ການຂ້າຕົວຕາຍ ຫຼື ພະຍາຍາມຈະຂ້າຕົວຕາຍ, ການທຳຮ້າຍຮ່າງການຈົນໄດ້ຮັບບາດເຈັບ, ບໍ່ວ່າຈະຍ້ອນຄວາມເປັນປົກກະຕິທາງຈິດ ຫຼື ບໍ່ກໍຕາມ; ຫຼື
- ເຊື້ອໄວລັດພູມຄຸ້ມກັນບົກພ່ອງ (ໂລກ ເອັດໄອວີ HIV) ຫຼື ບັນດາການເຈັບປ່ວຍທີ່ກ່ຽວຂ້ອງກັບໂລກເອດ ລວມມີ ໂລກພູມຄຸ້ມກັນບົກພ່ອງ (ໂລກ ເອດ AIDS) ແລະ/ຫຼື ບັນດາການກາຍພັນ, ການສືບພັນ ຫຼື ການແປງພັນອື່ນໆ; ຫຼື
- ການກະທຳ ຫຼື ພະຍາຍາມກະທຳ ທີ່ເປັນການກະທຳຜິດທາງອາຍາຂອງເຈົ້າຂອງສັນຍາປະກັນໄພ, ຜູ້ໄດ້ຮັບການປະກັນຊີວິດເອງ ຫຼື ຜູ້ໄດ້ຮັບຜົນປະໂຫຍດ /ບັນດາຜູ້ໄດ້ຮັບຜົນປະໂຫຍດ; ຫຼື
- ການນຳໃຊ້ສານເສບຕິດ ແລະ ສານກະຕຸ້ນທີ່ຜິດກົດໝາຍ, ການນຳໃຊ້ເຫຼົ້າທີ່ບໍ່ຖືກຕ້ອງ ຫຼື ຂັບລົດໃນຂະນະທີ່ມີມຶນເມົາ ດັ່ງທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ມີຜົນສັກສິດ; ຫຼື
- ການເຂົ້າຮ່ວມຫຼິ້ນກິດຈະກຳກິລາທີ່ເປັນອັນຕະລາຍ ລວມມີແຕ່ບໍ່ໄດ້ຈຳກັດສະເພາະແຕ່ ການດຳນ້ຳເລິກ, ການປີນພູ, ການໂດດຈ້ອງ, ການແຂ່ງຂັນທີ່ໃຊ້ຄວາມໄວສູງໃດໆກໍ່ຕາມ, ກິດຈະກຳກິລາອາຊີບ; ຫຼື
- ການເຂົ້າຮ່ວມຫຼິ້ນກິດຈະກຳການບິນ ຍົກເວັ້ນຜູ້ໂດຍສານທີ່ຈ່າຍຄ່າໂດຍສານໃນເຄື່ອງບິນທີ່ມີຫຼາຍເຄື່ອງຈັກ, ມີຕາຕະລາງການບິນ ແລະ ເປັນເຄື່ອງບິນທີ່ໄດ້ຮັບອານຸຍາດໃນການບິນ; ຫຼື
- ການຖືພາ, ການເກີດລູກ ຫຼື ພາວະແຊກຊ້ອນຂອງພວກເຂົາ; ຫຼື
- ສົງຄາມ, ການຮຸກຮານ, ການໂຈມຕີຂອງປະເທດອື່ນ (ເຖິງວ່າຈະມີ ຫຼື ບໍ່ມີການປະກາດສົງຄາມກໍ່ຕາມ), ການຕໍ່ຕ້ານ, ການເຂົ້າຮ່ວມການກໍ່ການຮ້າຍ, ສົງຄາມກາງເມືອງ, ການກໍ່ຈາລະຈອນ, ເຂົ້າຮ່ວມການກະທຳຜິດກົດໝາຍ, ການປະຕິວັດ, ການກໍ່ກະບົດ, ການແຊກແຊງຂອງເຈົ້າໜ້າທີ່ທະຫານ ຫຼື ການໂຄ່ນລົ້ມ, ການຈໍລະຈົນ ຫຼື ກໍ່ຄວາມວຸ່ນວາຍທາງແພ່ງ; ຫຼື
- ການເຈັບປ່ວຍທີ່ເກີດຈາກແມງໄມ້ກັດ (ລວມທັງ ຍຸງກັດ) ແລະ ການຕິດເຊື້ອຂອງແມ່ທ້ອງ; ຫຼື
- ພາວະທີ່ມີຢູ່ກ່ອນແລ້ວແລ້ວ, ເປັນຕົ້ນແມ່ນ ຄວາມເຈັບປ່ວຍ, ພະຍາດ ຫຼື ຄວາມບົກຜ່ອງທີ່ຜູ້ໄດ້ຮັບການປະກັນຊີວິດຢູ່ໃນຄວາມທໍລະມານເນື່ອງຈາກອຸປະຕິເຫດກ່ອນວັນເຂົ້າສັນຍາ, ເວັ້ນເສຍແຕ່ວ່າອຸປະຕິເຫດນັ້ນເກີດຂຶ້ນຫຼັງຈາກຜູ້ໄດ້ຮັບການປະກັນຊີວິດໄດ້ຖືກຮັບປະກັນໄພພາຍໃຕ້ສັນຍານີ້ຢູ່ກ່ອນແລ້ວ.

**ໝາຍເຫດສຳຄັນ:** ຂໍ້ກຳນົດ ແລະ ເງື່ອນໄຂທີ່ລະບຸໄວ້ໃນແຜ່ນພັບນີ້ແມ່ນບໍ່ຄົບຖ້ວນສົມບູນ. ກະລຸນາເບິ່ງຂໍ້ກຳນົດ ແລະ ເງື່ອນໄຂຜະລິດຕະພັນໂດຍລະອຽດສຳລັບຂໍ້ມູນເພີ່ມຕື່ມ.